# ບົດບັນທຶກຊ່ວຍຈໍາ

## ລະຫວ່າງ

## ວິທະຍາໄລຄູຫຼວງນໍ້າທາ ແຫ່ງ ສປປ ລາວ

## ແລະ ມະຫາວິທະຍາໄລສ້າງຄູຖ້າຍຫວງງນ ແຫ່ງ ສສ ຫວຽດນາມ

ຜູ້ອໍານວຍການວິທະຍາໄລຄູຫຼວງນໍ້າທາ ແຫ່ງ ສປປ ລາວ ແລະ ຜູ້ອໍານວຍການມະຫາວິທະຍາໄລສ້າງຄູຖ້າຍຫວງງນ ແຫ່ງ ສສ ຫວຽດນາມ ໄດ້ພ້ອມໃຈກັນເຊັນບົດບັນທຶກຊ່ວຍຈໍາການຮ່ວມມື ແລະ ແລກປ່ຽນທາງວິຊາການລະຫວ່າງສະຖາບັນທັງສອງມີລາຍລະອຽດດັ່ງນີ້:

**I.** ສະຖາບັນທັງສອງຈະແລກປ່ຽນ ແລະ ຮ່ວມມືກັນພັດທະນາທາງດ້ານສັງຄົມສາດ ແລະ ມະນຸດສາດໂດຍສະເພາະເລື່ອງການແລກປ່ຽນດ້ານການຮຽນ - ການສອນ ແລະ ດ້ານການບໍລິຫານ ຂອງທັງສອງໂຮງຮຽນໂດຍມີກິດຈະກໍາສໍາຄັນດັ່ງນີ້:

1. ບໍາລຸງ, ຍົກລະດັບໃນຖັນແຖວພະນັກງານຄູຂອງໂຮງຮຽນໃນການກໍ່ສ້າງລະດັບປະລິນຍາໂທ, ປະລິນຍາເອກ.
2. ບໍາລຸງ ແລະ ພັດທະນາຫຼັກສູດການກໍ່ສ້າງພະນັກງານຄູ: ຄູອະນຸບານ, ຄູປະຖົມ. ເຝິກອົບຮົມ ແລະ ບໍາລຸງຄວາມຮູ້ຄວາມສາມາດໃນສາຍວິຊາສະເພາະໃຫ້ແກ່ຄູສອນໃນສາຍຄູຄະນິດສາດ, ຟີຊິກສາດ, ເຄມີສາດ ແລະ ຊີວະສາດ.
3. ເຝິກອົບຮົມໃນດ້ານວິທີການສິດສອນ, ແລະ ລະດັບພາສາຕ່າງປະເທດ.
4. ວິທີການນໍາໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານໃນການບໍລິຫານ ແລະ ຄຸ້ມຄອງຫ້ອງສະໝຸດ ແລະ ຊອກຕໍາລາຮຽນ
5. ຄຸ້ມຄອງນັກສຶກສາໃນເວລາຮຽນ ແລະ ນອກເວລາຮຽນ.

**II.** ການດໍາເນີນກິດຈະກໍາຕ່າງໆໃນຂໍ້ທີ I ຈະດໍາເນີນການໄດ້ພາຍຫຼັງປຶກສາຫາລື ແລະ ຕົກລົງກັນທັງສອງຝ່າຍ

**III.** ສັນຍາຮ່ວມມືນີ້ຈະດໍາເນີນໄປເປັນໄລຍະເວລາ 5 ປີ ຫຼັງຈາກລົງນາມຮ່ວມກັນເປັນຕົ້ນໄປ ແລະ ອາດຈະຂະຫຍາຍຄວາມຮ່ວມມືຕໍ່ໄປໄດ້

**IV.** ບົດບັນທຶກຄວາມເຂົ້າໃຈສະບັບນີ້ຂຽນຂຶ້ນເປັນສອງພາສາຄື: ພາສາລາວ ແລະ ພາສາຫວຽດນາມຢ່າງລະສອງສະບັບ, ຮັກສາ ຝ່າຍລະ 1 ສະບັບ.

ວັນທີ..13.. ເດືອນ...12......ປີ..2016

ຜູ້ອໍານວຍການ

ວິທະຍາໄລຄູຫຼວງນໍ້າທາ

ຄໍາທິນ ຫຼວງລືໄຊ

Khamthonh LOUANGLUEXAY

ວັນທີ..13.. ເດືອນ....12.....ປີ..2016

ຜູ້ອໍານວຍການ

ມະຫາວິທະຍາໄລສ້າງຄູຖ້າຍຫວງງນ

GS.TS. Phạm Hồng Quang